BIÊN BẢN

KỲ HỌP LẦN THỨ 27 ỦY BAN LIÊN CHÍNH PHỦ VỀ HỢP TÁC KINH TẾ, VĂN HÓA, KHOA HỌC KỸ THUẬT GIỮA CHÍNH PHỦ NƯỚC CỘNG HÒA XÃ HỘI CHỦ NGHĨA VIỆT NAM VÀ CHÍNH PHỦ NƯỚC CỘNG HÒA DÂN CHỦ NHÂN DÂN LÀO

I. CHƯƠNG TRÌNH KỲ HỌP

Từ ngày 03 đến ngày 07 tháng 01 năm 2005, tại Hà Nội, Thủ đô nước Cộng hòa xã hội chủ nghĩa Việt Nam đã tiến hành kỳ họp lần thứ 27 Uỷ ban liên Chính phủ về hợp tác kinh tế, văn hóa, khoa học kỹ thuật giữa nước Cộng hòa xã hội chủ nghĩa Việt Nam và nước Cộng hòa dân chủ nhân dân Lào.

Đoàn Việt Nam do đồng chí Nguyễn Tấn Dũng, Uỷ viên Bộ Chính trị Ban chấp hành Trung ương Đảng Cộng sản Việt Nam, Phó Thủ tướng thường trực Chính phủ, Chủ tịch Phân ban hợp tác Việt Nam - Lào, Trưởng đoàn.

Đoàn Lào do đồng chí Thoong-lun Xi-xu-lít, Uỷ viên Bộ Chính trị Ban chấp hành Trung ương Đảng Nhân dân cách mạng Lào, Phó Thủ tướng Chính phủ, Chủ tịch Phân ban hợp tác Lào - Việt Nam, Trưởng đoàn.

Danh sách thành viên của đoàn Việt Nam và đoàn Lào (sau đây gọi tắt là hai Bên) ghi trong Phụ lục kèm theo.

Hai Bên thông qua chương trình làm việc của kỳ họp, đánh giá tình hình thực hiện Hiệp định về hợp tác kinh tế, văn hóa, khoa học kỹ thuật 2004, trao đổi phương hướng nhiệm vụ hợp tác năm 2005; ký Biên bản Kỳ họp và Hiệp định về hợp tác kinh tế, văn hóa, khoa học kỹ thuật giữa Việt Nam và Lào năm 2005.

II. ĐÁNH GIÁ TÌNH HÌNH THỰC HIỆN HIỆP ĐỊNH HỢP TÁC NĂM 2004.

Trong năm qua, hợp tác Việt Nam - Lào đã nhận được sự quan tâm thường xuyên của các Ban, ngành Trung ương, Quốc hội và Chính phủ hai Bên. Trên cơ sở Hiệp định về hợp tác kinh tế, văn hóa, khoa học kỹ thuật năm 2004; Hiệp định khung 2001-2005 giữa Chính phủ nước Cộng hòa xã hội chủ nghĩa Việt Nam và Chính phủ nước Cộng hòa dân chủ nhân dân Lào ký ngày 06 tháng 02 năm 2001 tại Hà Nội, hai Bên thống nhất ghi nhận:

Hợp tác kinh tế, văn hóa, khoa học kỹ thuật năm 2004 đã có bước chuyển biến tích cực; Hợp tác đào tạo đã đáp ứng được nhu cầu về số lượng, năm 2004 đã tăng 69,69% so với thoả thuận Hiệp định 2001-2005. Chất lượng đào tạo đã được quan tâm hơn. Số học sinh khá, giỏi năm 2004 tăng 53,63% so với 2003, chiếm 16,11% học sinh Lào học tại Việt Nam; Các thỏa thuận hợp tác về miễn thị thực cho người mang hộ chiếu phổ thông qua lại giữa hai nước, giảm 50% thuế suất thuế nhập khẩu và các quy định tính thuế, xuất xứ hàng hóa (C/O) từ mỗi nước, giảm phí sử dụng cảng Vũng Áng, giảm phí dịch vụ lao động và cấp thẻ theo thời hạn hợp đồng của người lao động Việt Nam tại Lào và cung cấp tín dụng bổ sung đường *18B* .. được hai Bên tích cực chủ động triển khai.

Kim ngạch xuất nhập khẩu tăng 30,9% so với năm 2003. Hoạt động xúc tiến đầu tư được sự quan tâm chỉ đạo của cả hai Bên đang được cải thiện. Hai Bên đã phối hợp tổ chức các Hội nghị xúc tiến đầu tư, thương mại vào Lào tại ba khu vực Bắc, Trung, Nam của Việt Nam. Nhiều doanh nghiệp đã quan tâm đầu tư các dự án lớn như trồng cây cao su, cà phê, chế biến gỗ xuất khẩu và khai khoáng nhằm tận dụng thế mạnh của mỗi nước, có tác động trực tiếp tới phát triển hợp tác kinh tế giữa hai nước. Các cơ chế, chính sách được xem xét, điều chỉnh đã tạo điều kiện thuận lợi hơn cho các doanh nghiệp trong hoạt động đầu tư, sản xuất. Hoạt động thanh toán được duy trì, tạo điều kiện thuận lợi cho việc mua bán, trao đổi hàng hoá, dịch vụ, đầu tư giữa hai nước.

Việc quản lý và sử dụng vốn viện trợ được quan tâm phối hợp kiểm tra thường xuyên của hai Bên đã từng bước đi vào nề nếp và tập trung hơn. Các dự án được hoàn thành đưa vào sử dụng đã đánh dấu sự chuyển biến mới trong quan hệ hợp tác giữa hai nước.

Hợp tác giữa các địa phương hai nước được mở rộng không chỉ hỗ trợ giúp đỡ nhau một cách thiết thực bằng kinh nghiệm, khả năng sẵn có theo truyền thống trước đây, mà đã có sự chuyển hướng tích cực trong việc hợp tác cùng phát triển trên nhiều lĩnh vực kinh tế. Hoạt động đầu tư, thương

mại của các doanh nghiệp được sự quan tâm của các địa phương hai Bên, có trọng tâm, trọng điểm, đáp ứng được nhu cầu phát triển, khai thác được tiềm năng và thế mạnh sẵn có về đất đai và nguồn tài nguyên, nhân lực của các địa phương mỗi Bên.

Tuy nhiên, hai Bên còn những khó khăn, tồn tại:

Kết quả đào tạo chưa được như mong muốn; phối hợp quản lý hai Bên trong việc thực hiện các Quy chế và Nghị định thư hợp tác đào tạo đã ký kết chưa chặt chẽ, chưa tạo được môi trường thúc đẩy học tập trong học sinh.

Hoạt động đầu tư còn chậm, chưa tạo sự chuyển biến tích cực trong sản xuất và thương mại giữa hai Bên. Các hàng hóa nông sản sản xuất tại mỗi nước chưa có những chính sách khuyến khích mạnh mẽ để thúc đẩy giao lưu giữa các địa phương hai Bên. Hệ thống cơ sở hạ tầng giao thông đầu tư chưa đúng tầm để thực sự trở thành mối liên kết hấp dẫn trong quan hệ hợp tác kinh tế giữa hai nước và khu vực. Việc tổ chức thực hiện Thoả thuận Viêng chăn 2002 còn chưa đồng đều và có sự phối hợp thống nhất giữa hai Bên.

Mặc dù đã có sự điều chỉnh nhằm duy trì và phát huy sớm hiệu quả các dự án hợp tác, song một số dự án (Trạm bơm đầu nguồn hệ thống thủy lợi Đông-phu-xi, Nâng cao năng lực Trung tâm đo lường Quốc gia Lào...) triển khai còn chậm và chưa dứt điểm. Quản lý các chương trình dự án đầu tư sử dụng vốn viện trợ của Việt Nam dành cho Lào còn có những bất cập.

III.. PHƯƠNG HƯỚNG VÀ NHIỆM VỤ CHỦ YẾU HỢP TÁC KINH TẾ, VĂN HÓA, KHOA HỌC KỸ THUẬT NĂM 2005.

Thực hiện tinh thần và nội dung cuộc gặp giữa hai Bộ Chính trị Đảng Cộng sản Việt Nam và Đảng Nhân dân cách mạng Lào ngày 06 tháng 01 năm 2005; Trên cơ sở Chiến lược hợp tác 10 năm, Hiệp định về hợp tác kinh tế, văn hóa, khoa học kỹ thuật giai đoạn 2001-2005;

Trong bối cảnh quốc tế và khu vực, xuất phát từ tình hình thực tế của mỗi nước việc khẳng định tiếp tục phát triển mối quan hệ hợp tác đặc biệt, đoàn kết hữu nghị gắn bó lâu đời Việt Nam - Lào là nhân tố quan trọng đảm bảo sự hợp tác hiệu quả trong lĩnh vực kinh tế, văn hoá, khoa học kỹ thuật giữa hai nước.

Năm 2005 là năm hoàn thành các thoả thuận đã được ký kết giữa hai nước giai đoạn 2001-2005, nhằm tiếp tục thúc đẩy quan hệ hợp tác giữa hai

nước, phương hướng và nhiệm vụ chủ yếu hợp tác kinh tế, văn hóa, khoa học kỹ thuật năm 2005 như sau:

1. Tiếp tục thúc đẩy hợp tác đầu tư làm cơ sở phát triển quan hệ kinh tế, thương mại của hai nước trên tinh thần tôn trọng chủ quyền, nâng cao tinh thần độc lập tự chủ nhằm khai thác thế mạnh của mỗi nước.

Trên từng lĩnh vực, hợp tác có lựa chọn với quy mô thích hợp mang tính đột phá vừa giải quyết thiết thực những nhu cầu trước mắt, tác động trực tiếp tới phát triển kinh tế, vừa tiêu biểu cho hợp tác hai nước.

Coi trọng chất lượng và hiệu quả và tác động của hợp tác tới quan hệ hai nước. Quan tâm hợp tác khu vực biên giới, tạo cơ sở cho việc phát triển kinh tế và giữ vững an ninh biên giới của mỗi nước.

2. Tập trung sử dụng vốn viện trợ vào việc duy trì và nâng cao chất lượng hợp tác phát triển nguồn nhân lực bằng những hình thức thích hợp, mở rộng hình thức chuyên gia đào tạo tại chỗ trên một số lĩnh vực quản lý tài chính, kinh tế, kế hoạch tại Lào;

Tiếp tục hoàn thành các nội dung đã thỏa thuận trong giai đoạn 2001-2005 giữa hai Bên.

Hợp tác có trọng tâm, trọng điểm, đồng bộ không dàn trải, hình thức. Tập trung vào các lĩnh vực sản xuất hàng hóa mà mỗi Bên có điều kiện, khả năng và có nhu cầu để thực sự tạo động lực phát triển cho mỗi Bên;

Củng cố lại các chương trình dự án đã hợp tác, tiếp tục hỗ trợ để duy trì hoạt động thường xuyên và hiệu quả các chương trình dự án đã được thực hiện trong quan hệ hợp tác giữa hai nước.

3. Trong các lĩnh vực hợp tác cụ thể:

3.1- Để nâng cao chất lượng đào tạo học sinh Lào tại Việt Nam, hai Bên thỏa thuận:

- Triển khai cụ thể trong năm 2005 việc thi tuyển chọn lưu học sinh sang học tại Việt Nam theo phương thức phía Lào tổ chức thi tuyển và cử học sinh sang học tại Việt Nam, phía Việt Nam phối hợp và kiểm tra tiếng Việt sau khi học dự bị để vào học bậc học của Việt Nam. Từ năm 2005, học sinh Lào sẽ sang học đại học tại Việt Nam được học dự bị đại học tối đa hai năm (trong đó một năm học tiếng Việt và một năm dự bị đại học)

- Phối hợp quản lý và thực hiện chặt chẽ Nghị định thư về hợp tác đào tạo cán bộ, ký ngày 15 tháng 01 năm 2002. Hợp tác giáo dục và đào tạo

giữa các địa phương hai nước ở các bậc học được thống nhất quản lý tập trung giữa hai Bộ Giáo dục.

- Phía Việt Nam hỗ trợ nghiên cứu, ban hành thống nhất giáo trình dạy tiếng Việt và bộ Từ điển Việt-Lào và Lào-Việt;

- Quan tâm hợp tác và hỗ trợ kỹ thuật cho các cơ sở đào tạo tiếng Việt tại Lào cũng như việc đầu tư các trang thiết bị cần thiết cho việc dạy và học tiếng Việt tại các trường dự bị tiếng Việt tại Việt Nam;

Giao hai Bộ Giáo dục nghiên cứu đề án giảng dạy cho Trường Trung học phổ thông nội trú bằng hai thứ tiếng Lào và Việt tại Lào để làm cơ sở xây dựng dự án đầu tư cho loại hình trường này.

- Đa dạng hoá hình thức đào tạo, theo khả năng của mình, phía Việt Nam sẵn sàng cử chuyên gia giúp Lào đào tạo tại chỗ ở Lào trên cơ sở yêu cầu cụ thể của phía Lào theo cơ chế Việt Nam hỗ trợ kinh phí đi, về và sinh hoạt phí cho chuyên gia, phía Lào chi phí ăn, ở và phương tiện đi lại, các điều kiện giảng dạy của chuyên gia Việt Nam tại Lào.

3.2- Củng cố, duy trì một cách đồng bộ hoạt động các chương trình dự án nông nghiệp đã hợp tác. Phía Việt Nam tiếp tục giúp Lào thiết bị bơm Hệ thống thủy lợi Thà-phạ-nọng-phông nhằm phục vụ phát triển nông nghiệp sản xuất lúa hàng hoá huyện Hạt-xài-phong thành phố Viêng chăn; Tiếp tục hỗ trợ kỹ thuật, chuyên gia duy trì chương trình nông nghiệp Chăm-pa-sắc và dự án khí tượng thủy văn phục vụ cho dự đoán khí tượng thủy văn phục vụ nông nghiệp và các lĩnh vực khác giữa hai nước...

- Khuyến khích các doanh nghiệp Việt Nam tham gia phát triển nuôi ong trong nhân dân vùng huyện Viêng Xay tỉnh Hủa Phăn vào mục tiêu xoá đói giảm nghèo dân tộc vùng biên giới.

- Khuyến khích việc hợp tác giữa Bộ Thủy sản Việt Nam và Bộ Nông nghiệp Lào trong việc nghiên cứu Quy hoạch phát triển nuôi trồng thủy sản và nâng cấp cơ sở nuôi trồng giống cá tại Lào.

3.3- Tiếp tục thực hiện cơ chế giảm thuế đối với hàng hoá có xuất xứ từ mỗi nước trên cơ sở các văn bản đã ban hành giữa hai Bên. Giao Bộ Thương mại hai nước trao đổi và thống nhất trong quý I năm 2005 danh mục hàng hóa có xuất xứ từ mỗi nước đưa vào diện hưởng thuế suất thuế nhập khẩu 0% để có thể áp dụng ngay trong năm 2005.

Tiếp tục tạo điều kiện thuận lợi về cơ chế và các chính sách ưu đãi khuyến khích đầu tư, thương mại khu vực Thương mại Lao Bảo (Quảng-Trị) và Đen-xa-vẳn (Sa-va-na-khét), làm cơ sở để nghiên cứu áp dụng mở rộng cho các khu Thương mại cửa khẩu Bờ Y (Kom Tum)- Phu cưa (Attôpư), cửa khẩu Na Mèo (Thanh Hoá-Hủa Phăn), Năm Cắn- Huội Din Đăm (Nghệ An- Xiêng Khoảng) và Na pê (Bolykhămxay)- Cầu Treo (Hà Tĩnh).

3.4 Hai Bộ Tài chính hai nước phối hợp với các Bộ, ngành, địa phương liên quan hai Bên nghiên cứu xây dựng cơ chế "kiểm tra một lần" tại cửa khẩu quốc tế giữa biên giới hai nước trình Chính phủ hai bên xem xét quyết định. Trước mắt thực hiện thí điểm tại cửa khẩu Đen xa vẳn (phía Lào) và Lao Bảo (phía Việt Nam). Đồng thời, thúc đẩy ngành hải quan hai nước sớm ký kết Bản ghi nhớ cụ thể hóa việc tổ chức thực hiện cơ chế "kiểm tra một lần" tại cửa khẩu quốc tế giữa biên giới hai nước để tạo điều kiện cho việc quản lý xuất nhập khẩu hàng hóa của mỗi bên phù hợp với thông lệ quốc tế.

3.5 Tiếp tục hợp tác trong lĩnh vực thông tin văn hóa, theo thỏa thuận phía Việt Nam giúp xây dựng Đài phát sóng chuyển tiếp của Lào tại Chăm-pa- sắc bằng vốn viện trợ của Việt Nam dành cho Lào. Phía Việt Nam hỗ trợ kỹ thuật, cùng phối hợp với phía Lào triển khai chương trình phụ đề tiếng Lào trên các kênh truyền hình chuyển tiếp của Việt Nam. Tiếp tục hỗ trợ củng cố, nâng cao năng lực và chuyên môn cho các cán bộ thuộc lĩnh vực thông tin đại chúng. Chia sẻ kinh nghiệm về hoạt động của Bảo tàng Cay-sỏn Phôn-vi-hản.

3.6. Tiếp tục thực hiện thoả thuận về việc tạo điều kiện thuận lợi cho người, hàng hoá, phương tiện qua lại giữa giữa hai nước tại "Thoả thuận Viêng chăn 2002". Phía Việt Nam bầy tỏ cảm ơn phía Lào đã có chủ trương điều chỉnh giá dịch vụ lao động phù hợp cho người lao động Việt Nam làm việc tại Lào. Giao hai Bộ Lao động hai Bên sớm tiếp tục trao đổi triển khai cụ thể nội dung trên.

3.7- Tăng cường hợp tác đầu tư giữa hai nước. Phía Lào tiếp tục ưu tiên cho Tổng Công ty Cao su Việt Nam và Công ty Cao su Đăk Lăk trồng và chế biến các sản phẩm cao su khu vực Nam Lào; tạo điều kiện cho Tổng Công ty Hóa Chất Việt Nam thăm dò chi tiết khai thác muối mỏ Kali Trung Lào, Công ty Trường Thành tỉnh Đăk Lăk chế biến gỗ xuất khẩu; tạo điều kiện cho Tổng Công ty Than đầu tư khai thác sử dụng nguồn than tại Năm

Ngân để xây dựng nhà máy nhiệt điện; tiếp tục sử dụng vốn viện trợ để điều tra thăm do khoáng sản Kali khu vực Trung Lào và Bô xit khu vực Nam Lào.

Coi trọng hợp tác đầu tư, thương mại giữa các địa phương. Khuyến khích hợp tác chăn nuôi và trồng cây công nghiệp, nông nghiệp giữa các địa phương giáp biên giới hai nước bằng nhiều hình thức, trước mắt theo phương thức cung cấp giống, kỹ thuật và bao tiêu sản phẩm phía Việt Nam, đất đai và lao động của phía Lào.

Thúc đẩy các cơ quan liên quan hai Bên sớm ký hợp đồng mua bán điện Nhà máy thủy điện Nậm Mô và dự án nhà máy thủy điện Sê ka mản 3.

3.8- Tập trung hoàn thành các tuyến đường qua biên giới để tạo điều kiện thuận lợi cho Lào quá cảnh hàng hóa qua lãnh thổ và cảng biển hiện có của Việt Nam. Phía Việt Nam tiếp tục cung cấp tín dụng xây dựng đường 18B để hoàn thành vào năm 2005. Giúp Lào xây dựng đoạn đường 6km nối Đường 6 của Lào với Tén Tần (Hủa phăn) biên giới giữa hai nước

Theo đề nghị của phía Lào, Việt Nam giúp nghiên cứu tiền khả thi đoạn đường Huội mạ- Phả thỉ dài 14 km tỉnh Hủa Phăn của Lào.

Hai Bên phối hợp hoàn thành tuyến đường 12 ở mỗi Bên để đưa vào sử dụng trong năm 2006. Việt Nam sẵn sàng đáp ứng yêu cầu vận tải hàng hoá của Lào qua cảng Vũng Áng khi phía Lào có nhu cầu.

Khuyến khích hợp tác trao đổi kinh nghiệm và đầu tư thương mại giữa hai ngành bưu chính viến thông hai nước,

3.9 -Phối hợp nghiên cứu cơ chế chính sách phù hợp với các quy định hiện hành giữa hai nước nhằm quản lý và nâng cao hiệu quả sử dụng nguồn vốn viện trợ hàng năm dành cho Lào, cũng như các cơ chế chính sách khác để thúc đẩy hơn nữa hợp tác kinh tế, đầu tư thương mại giữa hai nước.

3.10- Hai Bên cam kết cùng nhau phối hợp thực hiện tốt Thông báo chung về phát triển kinh tế xã hội khu vực Tam giác phát triển Campuchia-Lào-Việt Nam ký ngày 27 tháng 11 năm 2004 tại Viêng chăn.

3.11- Giao cho hai Phân ban hợp tác hai nước phối hợp đánh giá tình hình thực hiện Hiệp định hợp tác về kinh tế, văn hóa, khoa họckỹ thuật giữa hai nước giai đoạn 2001-2005, chuẩn bị Hiệp định và kế hoạch hợp tác giai đoạn 2006-2010 trình lên hai Chính phủ xem xét, làm cơ sở để ký kết vào

Kỳ họp Ủy ban liên Chính phủ lần thứ 28 tổ chức đầu năm 2006 tại Viêng chăn.

4. Phía Việt Nam mời các đồng chí lãnh đạo cao cấp của Nhà nước Lào cùng gia đình sangViệt Nam kiểm tra sức khỏe, điều trị và nghỉ ngơi.

Phía Lào mời các đồng chí lãnh đạo cao cấp của Nhà nước Việt Nam cùng gia đình sang nghỉ ngơi tại Lào.

Hai Bên quan tâm tạo điều kiện thăm, nghỉ ngơi cho các cán bộ lão thành cách mạng và quân tình nguyện của Việt Nam tại Lào.

5. Hai Bên thỏa thuận sẽ tiến hành kỳ họp lần thứ 28 Uỷ ban liên Chính phủ về hợp tác kinh tế, văn hóa, khoa học kỹ thuật vào đầu năm 2006 tại Viêng chăn, Thủ đô nước Cộng hòa dân chủ nhân dân Lào, thời gian cụ thể sẽ thông báo qua đường ngoại giao.

Biên bản này được ký tại Hà Nội, Thủ đô nước Cộng hòa xã hội chủ nghĩa Việt Nam ngày 07 tháng 01 năm 2005 thành hai bản, mỗi bản bằng hai thứ tiếng Việt và tiếng Lào. Cả hai văn bản đều có giá trị như nhau.

T/M CHÍNH PHỦ NƯỚC CỘNG HÒA XÃ HỘI CHỦ NGHĨA VIỆT NAM	**T/M CHÍNH PHỦ NƯỚC CỘNG HÒA DÂN CHỦ NHÂN DÂN LÀO**
Nguyễn Tấn Dũng	**Thoong-lun Xi-xu-lít**
PHÓ THỦ TƯỚNG	PHÓ THỦ TƯỚNG

ບົດບັນທຶກ

ກອງປະຊຸມ ຄັ້ງທີ 27 ຂອງຄະນະກຳມາທິການຮ່ວມມື ລະຫວ່າງ ລັດຖະບານ ກ່ຽວກັບການຮ່ວມມື ດ້ານເສດຖະກິດ, ວັດທະນະທຳ, ວິທະ ຍາສາດ - ເຕັກນິກ ລະຫວ່າງ ລັດຖະບານ ສ ສ ຫວຽດນາມ ແລະ ລັດຖະບານ ສ ປ ປ ລາວ.

I. <u>ວາລະກອງປະຊຸມ</u>

ກອງປະຊຸມ ຄັ້ງທີ 27 ຂອງຄະນະກຳມາທິການຮ່ວມມື ດ້ານເສດຖະກິດ, ວັດທະນະທຳ, ວິທະຍາ ສາດ - ເຕັກນິກ ລະຫວ່າງ ລັດຖະບານ ສາທາລະນະລັດ ສັງຄົມນິຍົມຫວຽດນາມ ແລະ ລັດຖະບານ ສາທາ ລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ດຳເນີນໄປ ແຕ່ວັນທີ 03 - 07 ມັງກອນ (1) ປີ 2005 ທີ່ຮ່າ ໂນ້ຍ, ນະຄອນຫຼວງ ແຫ່ງ ສາທາລະນະລັດ ສັງຄົມນິຍົມຫວຽດນາມ.

ຄະນະຜູ້ແທນຝ່າຍຫວຽດນາມ ນຳໂດຍ ສະຫາຍ ຫງຽນເຕີນຢຸ້ງ, ກຳມະການກົມການເມືອງສູນກາງ ພັກຄອມມູນິດຫວຽດນາມ, ຮອງ ນາຍົກລັດຖະມົນຕີ ຜູ້ປະຈຳການລັດຖະບານ, ປະທານຄະນະກຳມາທິການ ຮ່ວມມືຫວຽດນາມ - ລາວ ເປັນຫົວໜ້າຄະນະ.

ຄະນະຜູ້ແທນຝ່າຍລາວນຳໂດຍ ສະຫາຍ ທອງລຸນ ສີສຸລິດ ກຳມະການກົມການເມືອງສູນກາງພັກ ປະຊາຊົນປະຕິວັດລາວ, ຮອງ ນາຍົກລັດຖະມົນຕີ, ປະທານ ຄະນະກຳມາທິການຮ່ວມມື ລາວ - ຫວຽດນາມ ເປັນຫົວໜ້າຄະນະ.

ລາຍຊື່ ຄະນະຜູ້ແທນຝ່າຍລາວ ແລະ ຫວຽດນາມ (ຕໍ່ໄປນີ້ເອີ້ນວ່າສອງຝ່າຍ) ມີສາລະບານຄັດຕິດ ມາພ້ອມນີ້.

ສອງຝ່າຍໄດ້ເປັນເອກະພາບຕໍ່ວາລະກອງປະຊຸມ, ໂດຍສຸມໃສ່ຕີລາຄາສະພາບການຈັດຕັ້ງປະຕິບັດ ສັນຍາຮ່ວມມື ດ້ານເສດຖະກິດ, ວັດທະນະທຳ, ວິທະຍາສາດ - ເຕັກນິກ ຂອງປີ 2004, ປຶກສາຫາລື ທິດ ທາງແຜນການຮ່ວມມື ປີ 2005; ເຊັນບົດບັນທຶກກອງປະຊຸມ ແລະ ສັນຍາວ່າດ້ວຍການຮ່ວມມື ດ້ານເສດ ຖະກິດ, ວັດທະນະທຳ, ວິທະຍາສາດ - ເຕັກນິກ ລະຫວ່າງ ລາວ - ຫວຽດນາມ ປະຈຳປີ 2005 .

II . <u>ຕີລາຄາ ສະພາບການ ປະຕິບັດສັນຍາຮ່ວມມື ປະຈຳປີ 2004</u>.

ໃນປີທີ່ຜ່ານມາ, ການຮ່ວມມືລາວ - ຫວຽດນາມ ໄດ້ຮັບການເອົາໃຈໃສ່ຊີ້ນຳ ຈາກບັນດາພາກສ່ວນ, ຂະແໜງການຂັ້ນສູນກາງ, ສະພາແຫ່ງຊາດ ແລະ ລັດຖະບານຢ່າງໃກ້ຊິດຕິດແທດ. ບົນພື້ນຖານສັນຍາ ວ່າດ້ວຍການຮ່ວມມື ດ້ານເສດຖະກິດ, ວັດທະນະທຳ, ວິທະຍາສາດ - ເຕັກນິກ ປີ 2004 ແລະ ສັນຍາ ໄລຍະປີ 2001 - 2005 ລະຫວ່າງ ລັດຖະບານ ສ ປ ປ ລາວ ແລະ ລັດຖະບານ ສ ສ ຫວຽດນາມ ທີ່ໄດ້ ເຊັນກັນ ຄັ້ງວັນທີ 6 ກຸມພາ (2) ປີ 2001 ທີ່ນະຄອນຮ່າໂນ້ຍ, ສອງຝ່າຍໄດ້ເປັນເອກະພາບກັນ ຄືດັ່ງລຸ່ມນີ້:

ການຮ່ວມມື ດ້ານເສດຖະກິດ, ວັດທະນະທຳ, ວິທະຍາສາດ - ເຕັກນິກ ໃນປີ 2004 ໄດ້ມີບາດກ້າວ ຫັນປ່ຽນຢ່າງຕັ້ງໜ້າ; ການຮ່ວມມື ດ້ານການກໍ່ສ້າງ ຊັບພະຍາກອນມະນຸດ ສາມາດຕອບສະໜອງ ໄດ້ຕາມ ຄວາມຕ້ອງການ ທາງດ້ານປະລິມານ, ປີ 2004 ເພີ້ມຂຶ້ນ 69,69% ທຽບກັບ ການຕົກລົງ ໃນສັນຍາ 2001 - 2005, ຄຸນນະພາບດ້ານການກໍ່ສ້າງພະນັກງານ ກໍໄດ້ຮັບການເອົາໃຈໃສ່ດີກ່ວາເກົ່າ. ຈຳນວນນັກຮຽນເກັ່ງ ປານກາງ ປີ 2004 ເພີ້ມຂຶ້ນ 53,63% ທຽບໃສ່ປີ 2003, ກວມເອົາ 16,11% ຂອງຈຳນວນນັກຮຽນ ທັງໝົດຢູ່ ຫວຽດນາມ. ສອງຝ່າຍໄດ້ເປັນເຈົ້າການ ຈັດຕັ້ງຜັນຂະຫຍາຍ ຢ່າງຕັ້ງໜ້າ ບັນດາຂໍ້ຕົກລົງຮ່ວມມື ກ່ຽວກັບ ການຍົກເວັ້ນວີຊາ ໃຫ້ແກ່ພົນລະເມືອງ ທີ່ຖືໜັງສືຜ່ານແດນທຳມະດາໄປມາ ລະຫວ່າງ ສອງ ປະເທດ, ການຫຼຸດຜ່ອນ ອັດຕາພາສີນຳເຂົ້າ 50% ແລະ ລະບຽບການຄິດໄລ່ອັດຕາພາສີຂອງສິນຄ້າທີ່ມີຕົ້ນ ກຳເນີດ (C/O) ຢູ່ໃນແຕ່ລະປະເທດ, ການຫຼຸດຜ່ອນຄ່າທຳນຽມ ການນຳໃຊ້ທ່າເຮືອ ຫວຸ້ງອ່າງ, **ຫຼຸດຜ່ອນຄ່າບໍລິການ ແຮງງານ** ແລະ **ອອກບັດແຮງງານ** ຕາມກຳນົດເວລາທີ່ໄດ້ລະບຸໄວ້ ໃນຂໍ້ຜູກພັນໃຫ້ແກ່ແຮງງານ ຂອງ ຫວຽດນາມ ທີ່ມາເຮັດວຽກຢູ່ລາວ ແລະ ສະໜອງສິນເຊື່ອເພີ້ມເຕີມ ໃຫ້ແກ່ໂຄງການ ກໍ່ສ້າງທາງ 18 B...

ຍອດມູນຄ່າ ການຄ້າ ຂາອອກ - ຂາເຂົ້າ ລະຫວ່າງ ສອງປະເທດ ເພີ້ມຂຶ້ນ 30,6 % ທຽບໃສ່ປີ 2003, ສອງຝ່າຍ ໄດ້ເອົາໃຈໃສ່ຊີ້ນຳ, ຊຸກຍູ້ການເຄື່ອນໄຫວ ສົ່ງເສີມການລົງທຶນ ແລະ ໄດ້ປະສານສົມທົບ ກັນ ຈັດຕັ້ງກອງປະຊຸມສົ່ງເສີມການລົງທຶນ ແລະ ການຄ້າ ຢູ່ພາກເໜືອ, ພາກກາງ ແລະ ພາກໃຕ້ ຂອງ ຫວຽດນາມ. ບັນດາຫົວໜ່ວຍທຸລະກິດ ຂອງຫວຽດນາມ ມີຄວາມສົນໃຈມາລົງທຶນ ໃນບັນດາໂຄງການ ຂະ ໜາດໃຫຍ່ ຄື: ປູກຕົ້ນຢາງພາລາ, ກາເຟ, ປຸງແຕ່ງໄມ້ສົ່ງອອກ ແລະ ຂຸດຄົ້ນບໍ່ແຮ່ ບົນພື້ນຖານ ນຳໃຊ້ທ່າ ແຮງປຶ່ມຊ້ອນ ຂອງແຕ່ລະປະເທດ, ເຊິ່ງມີຜົນກະທົບໂດຍກົງ ຕໍ່ການພັດທະນາການຮ່ວມມື ທາງດ້ານເສດ ຖະກິດ ລະຫວ່າງ ສອງປະເທດ. ບັນດາກົນໄກ, ນະໂຍບາຍໄດ້ຮັບການພິຈາລະນາ, ດັດແກ້, ສ້າງເງື່ອນໄຂ ໃຫ້ແກ່ບັນດາຫົວໜ່ວຍທຸລະກິດ ເຄື່ອນໄຫວລົງທຶນ ແລະ ດຳເນີນການຜະລິດ ສະດວກກວ່າເກົ່າ. ການຊຳ ລະສະສາງ ໄດ້ດຳເນີນເປັນປົກກະຕິ ສ້າງເງື່ອນໄຂສະດວກ ໃຫ້ແກ່ການຊື້ - ຂາຍ, ແລກປ່ຽນສິນຄ້າ, ການ ບໍລິການ ແລະ ການລົງທຶນ ລະຫວ່າງ ສອງປະເທດ.

ການຄຸ້ມຄອງ ແລະ ນຳໃຊ້ແຫຼ່ງທຶນຊ່ວຍເຫຼືອ ແມ່ນໄດ້ຮັບການເອົາໃຈໃສ່ ປະສານສົມທົບກັນ ກວດກາ ເປັນປົກກະຕິ, ເລີ້ມມີຈຸດສຸມ ແລະ ເຂົ້າສູ່ລະບຽບ ເທື່ອລະກ້າວ. ບັນດາໂຄງການທີ່ສຳເລັດ ແລະ ນຳໃຊ້ເຂົ້າໃນວຽກງານຕົວຈິງ ໄດ້ເປັນຂີດໝາຍແຫ່ງການຫັນປ່ຽນໃໝ່ໃນການພົວພັນການຮ່ວມມື ລະຫວ່າງ ສອງປະເທດ.

ການຮ່ວມມື ລະຫວ່າງ ບັນດາທ້ອງຖິ່ນ ຂອງ ສອງປະເທດ ກໍໄດ້ເປີດກວ້າງອອກ, ບໍ່ພຽງແຕ່ເປັນ ການຊ່ວຍເຫຼືອກັນຢ່າງຈິງໃຈ ດ້ວຍບົດຮຽນປະສົບການ ແລະ ຄວາມອາດສາມາດຂອງຕົນ ຕາມມູນເຊື້ອ ທີ່ມີມາແຕ່ກ່ອນເທົ່ານັ້ນ, ຫາກເປັນການຮ່ວມມື ທີ່ມີການຫັນປ່ຽນ ຕາມທ່າອ່ຽງ ທີ່ຕັ້ງໜ້າ ເພື່ອພ້ອມກັນ ພັດ ທະນາດ້ານຕ່າງໆ ໃນຂົງເຂດເສດຖະກິດ. ການເຄື່ອນໄຫວລົງທຶນ, ການຄ້າຂອງບັນດາຫົວໜ່ວຍທຸລະກິດ ໄດ້ຮັບການເອົາໃຈໃສ່ ຈາກບັນດາທ້ອງຖິ່ນຂອງທັງສອງຝ່າຍ ແລະ ຄ່ອຍເຂົ້າສູ່ລະບົບລະບຽບ, ມີເປົ້າໝາຍ ແລະ ມີຈຸດສຸມ, ຕອບສະໜອງໄດ້ຕາມຄວາມຕ້ອງການໃນການພັດທະນາ, ຂຸດຄົ້ນໄດ້ທ່າແຮງ ແລະ ຄວາມ

ອາດສາມາດປົ່ນຊ້ອນ ຂອງດິນດອນ ແລະ ແຫ່ງຊັບພະຍາກອນທຳມະຊາດ, ຊັບພະຍາກອນມະນຸດຂອງ ແຕ່ລະຝ່າຍ.

ຢ່າງໃດກໍ່ດີ, ສອງຝ່າຍຍັງມີບັນດາຂໍ້ຫຍຸ້ງຍາກ ແລະ ຄົງຄ້າງຄື:

ໝາກຜົນຂອງການກໍ່ສ້າງ ພະນັກງານ, ນັກສຶກສາ ຍັງບໍ່ທັນບັນລຸໄດ້ຕາມຄວາມມຸ້ງຫວັງ; ການປະສານສົມທົບກັນຄຸ້ມຄອງຂອງສອງຝ່າຍ ໃນການປະຕິບັດບັນດາລະບຽບການ ແລະ ອະນຸສັນຍາຮ່ວມມື ດ້ານການກໍ່ສ້າງ ພະນັກງານ, ນັກສຶກສາ ທີ່ໄດ້ເຊັນກັນນັ້ນ ຍັງບໍ່ທັນໜັກແໜ້ນ, ບໍ່ທັນສ້າງສະພາບແວດລ້ອມ ທີ່ເອື້ອອຳນວຍ ເພື່ອຊຸກຍູ້ ການສຶກສາຮ່ຳຮຽນຂອງນັກຮຽນ.

ການເຄື່ອນໄຫວການລົງທຶນຍັງຊັກຊ້າ, ການຜະລິດ ແລະ ການຄ້າ ລະຫວ່າງ ສອງຝ່າຍ ບໍ່ທັນມີການຫັນປ່ຽນທີ່ຕັ້ງໜ້າ. ສິນຄ້າກະສິກຳ ທີ່ຜະລິດຢູ່ແຕ່ລະປະເທດ ຍັງບໍ່ທັນໄດ້ມີນະໂຍບາຍສົ່ງເສີມຢ່າງ ແຂງແຮງ ເພື່ອຊຸກຍູ້ການຜະລິດ ແລະ ການພົວພັນຄ້າຂາຍ ລະຫວ່າງ ບັນດາທ້ອງຖິ່ນຂອງສອງຝ່າຍ. ການ ລົງທຶນ ກໍ່ສ້າງລະບົບພື້ນຖານ ໂຄງລ່າງທາງດ້ານຄົມມະນາຄົມ ຍັງບໍ່ທັນເໝາະສົມກັບຄວາມຕ້ອງການ ເພື່ອ ສ້າງເງື່ອນໄຂ ສະດວກ ໃນການຮ່ວມມືເສດຖະກິດ ລະຫວ່າງ ສອງປະເທດ ແລະ ພາກພື້ນ. ການຈັດຕັ້ງປະຕິ ບັດ " ຂໍ້ຕົກລົງວຽງຈັນ 2002 " ຍັງບໍ່ທັນທົ່ວເຖິງ ແລະ ການປະສານສົມທົບເປັນເອກະພາບ ລະຫວ່າງ ສອງ ຝ່າຍກໍຍັງບໍ່ທັນພ້ອມພຽງກັນ.

ບັນດາໂຄງການຮ່ວມມື ເຖິງວ່າ ໄດ້ມີການປັບປຸງດັດແກ້ ແນໃສ່ຮັກສາ ແລະ ເສີມຂະຫຍາຍ ທາງ ດ້ານປະສິດທິຜົນ ກໍຕາມ, ແຕ່ກໍຍັງມີບາງໂຄງການ ຈັດຕັ້ງຜັນຂະຫຍາຍຊັກຊ້າ ແລະ ບໍ່ທັນສຳເລັດເທື່ອ ເຊັ່ນ: (ໂຄງການປະກອບຈັກສູບນ້ຳໃສ່ຫ້ວງານ ລະບົບຊົນລະປະທານດົງໂພສີ, ໂຄງການຍົກລະດັບຄວາມ ອາດສາມາດໃຫ້ແກ່ສູນວັດແທກແຫ່ງຊາດລາວ...), ການຄຸ້ມຄອງບັນດາກິດຈະການໂຄງການລົງທຶນ ທີ່ນຳ ໃຊ້ແຫ່ງທຶນຊ່ວຍເຫຼືອຂອງ ຫວຽດນາມ ໃຫ້ແກ່ລາວ ບາງອັນຍັງປະຕິບັດບໍ່ທັນຖືກຕ້ອງຕາມລະບຽບຫລັກ ການ ທີ່ໄດ້ກຳນົດໄວ້.

III. <u>ທິດທາງ ແລະ ໜ້າທີ່ຕົ້ນຕໍຂອງການຮ່ວມມື ດ້ານເສດຖະກິດ, ວັດທະນະທຳ, ວິທະຍາສາດ - ເຕັກນິກ ປີ 2005</u>.

ປະຕິບັດຕາມເນື້ອໃນຈິດໃຈ ຂອງການພົບປະ ລະຫວ່າງ ສອງກົມການເມືອງ ສູນກາງພັກປະຊາຊົນ ປະຕິວັດລາວ ແລະ ກົມການເມືອງສູນກາງພັກຄອມມູນິດຫວຽດນາມ ຄັ້ງວັນທີ 06 ມັງກອນ(1) ປີ 2005, ບົນພື້ນຖານຍຸດທະສາດຂອງການຮ່ວມມື 10 ປີ, ສັນຍາວ່າດ້ວຍການຮ່ວມມືດ້ານເສດຖະກິດ, ວັດທະນະ ທຳ, ວິທະຍາສາດ - ເຕັກນິກ ໄລຍະ 2001 - 2005.

ໃນສະພາບແວດລ້ອມ ສາກົນ ແລະ ພາກພື້ນ ແລະ ສະພາບການຕົວຈິງ ຂອງແຕ່ລະປະເທດ, ສອງ ຝ່າຍຢືນຢັນ ການສືບຕໍ່ເສີມຂະຫຍາຍສາຍພົວພັນຮ່ວມມືແບບພິເສດ, ຄວາມສາມັກຄີມິດຕະພາບສະໜິດ ສະໜົມທີ່ມີມາແຕ່ດົນນານ ລະຫວ່າງ ລາວ - ຫວຽດນາມ ເປັນປັດໃຈອັນສຳຄັນ ຮັບປະກັນປະສິດທິຜົນ ໃນ ການຮ່ວມມື ດ້ານເສດຖະກິດ, ວັດທະນະທຳ, ວິທະຍາສາດ - ເຕັກນິກ ລະຫວ່າງ ສອງປະເທດ.

ປີ 2005 ເປັນປີທີ່ ຈະຕ້ອງສຳເລັດການປະຕິບັດບັນດາຂໍ້ຕົກລົງທີ່ໄດ້ເຊັນກັນ ລະຫວ່າງ ສອງປະເທດ ໃນໄລຍະ 2001 - 2005, ເພື່ອສືບຕໍ່ຊຸກຍູ້ການພົວພັນຮ່ວມມື ລະຫວ່າງ ສອງປະເທດ, ທິດທາງ ແລະ ໜ້າທີ່ ຕົ້ນຕໍຂອງການ ຮ່ວມມືດ້ານເສດຖະກິດ, ວັດທະນະທຳ, ວິທະຍາສາດ - ເຕັກນິກ ປີ 2005 ຄື ດັ່ງນີ້:

1. ສືບຕໍ່ຊຸກຍູ້ການຮ່ວມມືລົງທຶນເພື່ອເປັນພື້ນຖານໃຫ້ການຂະຫຍາຍການພົວພັນທາງ ດ້ານເສດຖະ ກິດ, ການຄ້າ ຂອງສອງປະເທດ, ປົນຈິດໃຈເຄົ້າລົບ***ອະທິປະໄຕ,*** ເຊີດຊູຈິດໃຈ***ເອກະລາດ***ເປັນເຈົ້າຕົນເອງ, ແນໃສ່ ຂຸດຄົ້ນທ່າແຮງປົ່ມຊ້ອນຂອງແຕ່ລະປະເທດ.

ໃນແຕ່ລະຂົງເຂດ, ການຮ່ວມມື ໃຫ້ມີການເລືອກເຟັ້ນຂະໜາດທີ່ເໝາະສົມ ມີບາດກ້າວທັນປ່ຽນ ໃໝ່, ທັງສາມາດແກ້ໄຂ ຄວາມຕ້ອງການ ສະເພາະໜ້າຢ່າງແທດເໝາະຕົວຈິງ ແລະ ກະທົບໂດຍກົງ ຕໍ່ການ ພັດທະນາເສດຖະກິດ, ທັງເປັນສັນຍາລັກ ແຫ່ງ ການຮ່ວມມື ລະຫວ່າງ ສອງປະເທດ.

ຖືເອົາຄຸນນະພາບ, ປະສິດທິຜົນ ແລະ ຜົນກະທົບຂອງການຮ່ວມມືຕໍ່ສາຍພົວພັນ ລະຫວ່າງ ສອງປະ ເທດເປັນສຳຄັນ. ເອົາໃຈໃສ່ການຮ່ວມມືຢູ່ເຂດຊາຍແດນ. ສ້າງພື້ນຖານໃຫ້ການພັດທະນາເສດຖະກິດ ແລະ ຮັກສາຄວາມສະຫງົບ ຢູ່ ເຂດຊາຍແດນຂອງແຕ່ລະປະເທດ.

2. ການນຳໃຊ້ແຫຼ່ງທຶນຊ່ວຍເຫຼືອ ແມ່ນສຸມໃສ່ການປັບປຸງ ແລະ ຍົກສູງຄຸນນະພາບ ການຮ່ວມມື ດ້ານການພັດທະນາ ຊັບພະຍາກອນມະນຸດ ດ້ວຍຮູບການຕ່າງໆ ທີ່ເໝາະສົມ, ເປີດກວ້າງຮູບການສົ່ງຊ່ຽວ ຊານ ມາຝຶກອົບຮົມກັບທີ່ ໃນບາງຂົງເຂດ ຄຸ້ນຄອງການເງິນ, ເສດຖະກິດ, ແຜນການ ຢູ່ ລາວ.

ສືບຕໍ່ປະຕິບັດ ບັນດາເນື້ອໃນ ທີ່ໄດ້ຕົກລົງກັນໃນໄລຍະ 2001 - 2005 ລະຫວ່າງ ສອງຝ່າຍ ໃຫ້ສຳ ເລັດ.

ການຮ່ວມມືໃຫ້ມີເປົ້າໝາຍ, ມີຈຸດສຸມ, ເປັນລະບົບຄົບຊຸດ, ບໍ່ກະແຈກກະຈາຍ ແລະ ຮູບການ, ໂດຍສຸມໃສ່ຂົງເຂດການຜະລິດເປັນສິນຄ້າ ເຊິ່ງແຕ່ລະຝ່າຍມີເງື່ອນໄຂ, ຄວາມສາມາດ ແລະ ມີຄວາມຕ້ອງ ການເພື່ອເປັນກຳລັງ ຊຸກຍູ້ ໃຫ້ແກ່ການພັດທະນາ ຂອງແຕ່ລະປະເທດ ຢ່າງແທ້ຈິງ.

ປັບປຸງຄືນ ບັນດາກິດຈະການໂຄງການທີ່ໄດ້ຮ່ວມມື ໃນຜ່ານມາ, ສືບຕໍ່ຊ່ວຍໜູນເພື່ອປັບປຸງບູລະ ນະ ບັນດາກິດຈະການ ໂຄງການທີ່ໄດ້ຮັບການຊ່ວຍເຫລືອ ໃນການພົວພັນຮ່ວມມື ລະຫວ່າງ ສອງປະເທດ ໃຫ້ມີການເຄື່ອນໄຫວ ເປັນປົກກະຕິ ແລະ ມີປະສິດທິຜົນ ຕໍ່ໄປ.

3. ບັນດາຂົງເຂດການຮ່ວມມື ລະອຽດ:

3.1. ເພື່ອຍົກສູງຄຸນນະພາບ ໃນການກໍ່ສ້າງນັກສຶກສາລາວ ຢູ່ຫວຽດນາມ ສອງຝ່າຍຕົກລົງ:

- ປີ 2005, ຜັນຂະຫຍາຍລະອຽດກ່ຽວກັບ ການສອບເສັງຄັດເລືອກ ນັກຮຽນລາວ ໄປຮຽນ ຢູ່ ຫວຽດນາມ ຕາມວິທີການ ຝ່າຍລາວຮັບຜິດຊອບການ ສອບເສັງຄັດເລືອກ ແລະ ສົ່ງນັກຮຽນໄປຮຽນ ຢູ່ ຫວຽດນາມ, ຝ່າຍຫວຽດນາມ ປະສານສົມທົບກັບຝ່າຍລາວ ກວດກາດ້ານພາສາ ຫລັງຈາກຮຽນປີກຽມ ເພື່ອ ເຂົ້າຮຽນຊັ້ນຕ່າງໆ ຢູ່ຫວຽດນາມ. ເລີ້ມແຕ່ ປີ 2005, ນັກຮຽນລາວທີ່ໄປຮຽນມະຫາວິທະຍາໄລຢູ່ຫວຽດນາມ ຕ້ອງໄດ້ໄປຮຽນກຽມຢູ່ຫວຽດນາມ 02 ປີ (ໃນນັ້ນ 01 ປີ ຮຽນພາສາຫວຽດນາມ ແລະ ອີກ 01 ປີ ກຽມເຂົ້າ ມະຫາວິທະຍາໄລ).

- ປະສານສົມທົບກັນ ຄຸ້ມຄອງ ແລະ ປະຕິບັດອະນຸສັນຍາວ່າດ້ວຍການຮ່ວມມື ໃນການກໍ່ສ້າງພະນັກງານ ທີ່ໄດ້ເຊັນໃນວັນທີ 15 / 1 / 2002 ຢ່າງເຂັ້ມງວດ. ການຮ່ວມມື ໃນການກໍ່ສ້າງພະນັກງານ ລະຫວ່າງ ບັນດາທ້ອງຖິ່ນຕ່າງໆ ຂອງສອງປະເທດ ໃນລະດັບຕ່າງໆ ກໍໃຫ້ມີການຄຸ້ມຄອງແບບລວມສູນ ເປັນເອກະພາບ ລະຫວ່າງ ກະຊວງສຶກສາຂອງສອງຝ່າຍ.

- ຝ່າຍຫວຽດນາມປະສານສົມທົບກັບຝ່າຍລາວ ຄົ້ນຄວ້າ ເພື່ອສ້າງຫຼັກສູດການສອນພາສາຫວຽດ ແລະ ວັດຈະນານຸກົມ ລາວ - ຫວຽດ ແລະ ຫວຽດ - ລາວ.

- ເອົາໃຈໃສ່ຮ່ວມມື ແລະ ຊ່ວຍຍົກລະດັບທາງດ້ານເຕັກນິກ ໃຫ້ແກ່ຂະແໜງພາສາຫວຽດ ຢູ່ລາວ ແລະ ລົງທຶນປະກອບເຄື່ອງອຸປະກອນ ທີ່ຈຳເປັນໃຫ້ແກ່ການສອນ ແລະ ການຮຽນພາສາຫວຽດ ຢູ່ ບັນດາ ໂຮງຮຽນກຽມພາສາຫວຽດ ຢູ່ ຫວຽດນາມ;

- ມອບໃຫ້ກະຊວງສຶກສາ ສອງຝ່າຍ ຄົ້ນຄ້ວາ ໂຄງການ ສິດສອນ ສຳລັບໂຮງຮຽນມັດທະຍົມ ສາມັນ ກົນນອນ ທີ່ສອນເປັນສອງ ພາສາ ລາວ ແລະ ຫວຽດນາມ ເພື່ອເປັນພື້ນຖານໃຫ້ແກ່ ໂຄງການລົງທຶນ ກໍ່ສ້າງ ໂຮງຮຽນດັ່ງກ່າວ.

- ຝ່າຍຫວຽດນາມ ຍິນດີຊ່ວຍເຫລືອດ້ານການກໍ່ສ້າງບຳລຸງດ້ວຍຫລາຍຮູບການ ຕາມຄວາມອາດສາມາດຂອງຕົນ, ກຽມພ້ອມ ສົ່ງຊ່ຽວຊານ ມາຊ່ວຍລາວ ເຝິກອົບຮົມວິຊາການດ້ານຕ່າງໆ ບົນພື້ນຖານຄວາມຮຽກຮ້ອງຕ້ອງການຕົວຈິງ ຂອງຝ່າຍລາວ ຊຶ່ງຝ່າຍຫວຽດນາມ ຮັບຜິດຊອບຊ່ວຍຄ່າໃຊ້ຈ່າຍ ໃນການເດີນທາງໄປ - ກັບ ແລະ ອັດຕາເບ້ຍລ້ຽງໃຫ້ແກ່ຊ່ຽວຊານ, ຝ່າຍລາວຮັບຜິດຊອບຄ່າໃຊ້ຈ່າຍໃນການກິນ, ທີ່ພັກເຊົ່າ, ພາຫະນະຮັບໃຊ້ ສຳລັບການເຄື່ອນໄຫວວຽກງານ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ໃນການ ປະຕິບັດໜ້າທີ່ ຂອງຊ່ຽວຊານຫວຽດນາມ ຢູ່ລາວ.

3.2. ປັບປຸງ, ບູລະນະ ບັນດາກິດຈະການໂຄງການ ກະສິກຳ ທີ່ໄດ້ຮ່ວມມື ຜ່ານມາ ໃຫ້ມີການເຄື່ອນໄຫວປົກກະຕິ. ຝ່າຍຫວຽດນາມສືບຕໍ່ຊ່ວຍລາວ ປະກອບເຄື່ອງຈັກສູບນ້ຳໃຫ້ແກ່ລະບົບຊົນລະປະທານ ທ່າພະ - ໜອງພີ້ງ, ແນໃສ່ຮັບໃຊ້ໂຄງການພັດທະນາ ການຜະລິດກະສິກຳ ເປັນສິນຄ້າ ຢູ່ໃນເຂດ ເມືອງ ຫາດຊາຍຟອງ ນະຄອນຫລວງວຽງຈັນ ຢ່າງມີປະສິດທິຜົນ; ສືບຕໍ່ ຊ່ວຍທາງດ້ານ ເຕັກນິກ ແລະ ຊ່ຽວຊານມາຟື້ນຟູ ກິດຈະການ ກະສິກຳ ຢູ່ເມືອງຈຳປາສັກ ແລະໂຄງການ ອຸຕຸນິຍົມ - ອຸທົກກະສາດ ເພື່ອຮັບໃຊ້ໃຫ້ແກ່ ການພະຍາກອນດ້ານອຸຕຸນິຍົມ - ອຸທົກກະສາດ ຮັບໃຊ້ກະສິກຳ ແລະ ຂົງເຂດອື່ນໆ ລະຫ່ວາງ ສອງປະເທດ.

ສົ່ງເສີມບັນດາ ຫົວໜ່ວຍທຸລະກິດ ຂອງຫວຽດນາມ ລົງທຶນພັດທະນາການລ້ຽງເຜີ້ງ ໃນໝູ່ ບ້ານປະຊາຊົນຢູ່ເຂດເມືອງວຽງໄຊ, ແຂວງ ຫົວພັນ ແນ່ໃສ່ເປົ້າໝາຍລົບລ້າງ ຄວາມທຸກຍາກ ຂອງຊົນເຜົ່າຢູ່ເຂດ ຊາຍແດນ.

ສົ່ງເສີມໃຫ້ກະຊວງກະສິກຳ-ປ່າໄມ້ຂອງລາວ ຮ່ວມມື ກັບ ກະຊວງ ການປະມົງ ຂອງຫວຽດນາມ ເພື່ອ ສຶກສາຄົ້ນຄ້ວາ ສ້າງແຜນກຳນົດ ການພັດທະນາ ການປະມົງ ແລະ ຍົກລະດັບພື້ນຖານການຜະລິດແນວ ພັນປາຢູ່ລາວ.

3.3 ສືບຕໍ່ປະຕິບັດກົນໄກ **ຫຼຸດຜ່ອນອັດຕາພາສີນຳເຂົ້າ** 50% ສຳລັບສິນຄ້າ ທີ່ມີຕົ້ນກຳເນີດ ຈາກແຕ່ລະປະເທດ ບົນພື້ນຖານລະບຽບການ ທີ່ໄດ້ຕົກລົງກັນ. ມອບໃຫ້ກະຊວງ ການຄ້າ ສອງຝ່າຍແລກ

ປ່ງນ ແລະ ເປັນເອກະພາບກັນ ກ່ຽວກັບ ບັນຊີລາຍການສິນຄ້າທີ່ມີຕົ້ນກຳເນີດ ຈາກແຕ່ລະປະເທດ ທີ່ຫລຸດ ຜ່ອນອັດຕາພາສີນຳເຂົ້າ 0 % ໃຫ້ແກ່ສິນຄ້າ ທີ່ມີຕົ້ນກຳເນີດ ຈາກແຕ່ລະປະເທດ ໃຫ້ສຳເລັດພາຍໃນ2ວ ໂ ປີ 2005 ແລ້ວນຳສະເໜີ ລັດຖະບານ ສອງປະເທດພິຈາລະນາ ຕົກລົງ ເພື່ອຈັດຕັ້ງປະຕິບັດ ໃນປີ 2005 .

ສືບຕໍ່ສ້າງເງື່ອນໄຂສະດວກ ດ້ານກົນໄກ ແລະ ນະໂຍບາຍເພື່ອສົ່ງເສີມ ການລົງທຶນ, ການຄ້າ ຢູ່ເຂດການຄ້າຊາຍແດນ ແດນສະຫວັນ (ສະຫວັນນະເຂດ) - ລາວບາວ (ກວາງ ຈິ) ເພື່ອເປັນພື້ນຖານ ເປີດກວ້າງ ນຳໃຊ້ ຢູ່ເຂດການຄ້າ ດ່ານໜູເກືອ (ອັດຕະປື) - ເບີອີ (ກອນຕຸມ), ດ່ານນາ ແມວ (ຫົວພັນ - ແທງຮ່ວາ), ດ່ານນ້ຳກັ້ນ ຫ້ວຍດີນດຳ (ຊຽງຂວາງ - ເທງະອ່ານ) ແລະ ດ່ານນ້ຳພາວ (ບໍລິຄຳໄຊ) - ເກົ່າແຈວ (ຮ່າຕິ້ງ).

3.4 - ມອບໃຫ້ກະຊວງການເງິນ ປະສານສົມທົບກັບ ບັນດາກະຊວງ, ຂະແໜງການ ແລະ ທ້ອງຖິ່ນ ທີ່ກ່ຽວຂ້ອງ ຂອງສອງຝ່າຍ ຄົ້ນຄ້ວາສ້າງກົນໄກ " ການກວດກາເທື່ອດຽວ " ຢູ່ດ່ານສາກົນ ລະຫວ່າງ ຊາຍ ແດນ ຂອງສອງປະເທດ, ເພື່ອນຳສະເໜີລັດຖະບານ ສອງຝ່າຍພິຈາລະນາ ຕົກລົງໂດຍໄວ. ໃນສະເພາະ ໜ້ານີ້ ແມ່ນໃຫ້ຈັດຕັ້ງປະຕິບັດ ທົດລອງຢູ່ດ່ານຊາຍແດນ ແດນສະຫວັນ (ຝ່າຍລາວ) ແລະ ລາວບາວ (ຝ່າຍ ຫວຽດນາມ) ກ່ອນ. ພ້ອມກັນນັ້ນ ກໍຊຸກຍູ້ ໃຫ້ຂະແໜງການພາສີ ຂອງສອງປະເທດ ເຊັນບົດບັນທຶກ ຊ່ວຍຈຳນຳກັນ ເພື່ອຫັນການຈັດຕັ້ງປະຕິບັດກົນໄກ " ການກວດກາເທື່ອດຽວ " ຢູ່ດ່ານສາກົນ ລະຫວ່າງ ຊາຍ ແດນຂອງສອງປະເທດ ໃຫ້ເປັນອັນລະອຽດ ເພື່ອສ້າງເງື່ອນໄຂໃຫ້ແກ່ການຄຸ້ມຄອງ ການສົ່ງອອກ ແລະ ນຳເຂົ້າສິນຄ້າ ຂອງແຕ່ລະຝ່າຍ ໂດຍສອດຄ່ອງກັບ ລະບຽບການສາກົນ.

3.5 ສືບຕໍ່ຮ່ວມມືໃນຂົງເຂດຖະແຫຼງຂ່າວ - ວັດທະນະທຳ, ຝ່າຍຫວຽດນາມ ຊ່ວຍກໍ່ສ້າງສະຖານີ ຖ່າຍທອດ ວິທະຍຸ ແລະ ໂທລະພາບ ຢູ່ເຂດຈຳປາສັກ ດ້ວຍແຫຼ່ງທຶນຊ່ວຍເຫຼືອຂອງຫວຽດນາມ ໃຫ້ແກ່ລາວ ຕາມທີ່ໄດ້ຕົກລົງກັນ. ຝ່າຍຫວຽດນາມ ຊ່ວຍເຫລືອດ້ານເຕັກນິກ ແລະ ປະສານສົມທົບກັບຝ່າຍລາວ ເພື່ອ ອອກລາຍການໂທລະພາບຫວຽດນາມ ພາກເປັນພາສາລາວ ທີ່ສະຖານີຖ່າຍທອດໂທລະພາບຂອງ ຫວຽດ ນາມ ຢູ່ລາວ. ສືບຕໍ່ຊ່ວຍປັບປຸງ, ຍົກລະດັບຄວາມສາມາດ ແລະ ວິຊາການໃຫ້ແກ່ບັນດາ ພະນັກງານຂົງ ເຂດສື່ມວນຊົນ. ແລກປ່ຽນບົດຮຽນດ້ານການເຄື່ອນໄຫວຂອງ ຫໍພິພິດຕະພັນ ໄກສອນ ພົມວິຫານ.

3.6 ສືບຕໍ່ປະຕິບັດ ຂໍ້ຕົກລົງກ່ຽວກັບການສ້າງເງື່ອນໄຂ ສະດວກໃຫ້ແກ່ຄົນ, ສິນຄ້າ, ພາຫະນະ ໄປ ມາຫາສູ່ ລະຫວ່າງ ສອງປະເທດ ຕາມ " ຂໍ້ຕົກລົງວຽງຈັນ 2002 ". ຝ່າຍຫວຽດນາມ ສະແດງຄວາມຂອບໃຈ ທີ່ຝ່າຍລາວ ໄດ້ດັດປັບຄ່າບໍລິການແຮງງານ ຢ່າງເໝາະສົມ ສຳລັບຜູ້ອອກແຮງງານ ຫວຽດນາມ ທີ່ມາເຮັດ ວຽກ ຢູ່ລາວ ຕາມທີ່ໄດ້ຕົກລົງກັນ. ມອບໃຫ້ກະຊວງແຮງງານ ຂອງສອງຝ່າຍ ພົ້ນຂະຫຍາຍລະອຽດ ເນື້ອໃນ ດັ່ງ ທີ່ກ່າວມາເທິງນັ້ນ ໂດຍໄວ.

3.7 ເພີ້ມທະວີການຮ່ວມມືລົງທຶນ ລະຫວ່າງ ສອງປະເທດ. ຝ່າຍລາວສືບຕໍ່ ສ້າງເງື່ອນໄຂ ສະດວກ ໃຫ້ແກ່ ສະຫະບໍລິສັດ ຢາງພາລາ ຫວຽດນາມ ແລະ ບໍລິສັດ ຢາງພາລາດັກລັກ ປູກ ແລະ ປຸງແຕ່ງ ຜະລິດ ຕະພັນ ຢາງພາລາ ຢູ່ ເຂດພາກໃຕ້ຂອງລາວ; ສ້າງເງື່ອນໄຂສະດວກ ໃຫ້ສະຫະບໍລິສັດ ເຄມີຫວຽດນາມ ດຳ ເນີນການ ສຳຫລວດລະອຽດ ແລະ ຂຸດຄົ້ນ ບໍ່ເກືອກາລີ ຢູ່ເຂດພາກກາງຂອງລາວ; ບໍລິສັດເຈືອງແທງ ແຂວງ ດັກລັກ ປຸງແຕ່ງໄມ້ສົ່ງອອກ, ສ້າງເງື່ອນໄຂໃຫ້ ສະຫະບໍລິສັດ ຖ່ານຫີນ ຫວຽດນາມ ມາລົງທຶນ ຂຸດຄົ້ນນຳ

ໃຊ້ແຫລ່ງຖ່ານຫີນ ຢູ່ນ້ຳເງິນ ເພື່ອກໍ່ສ້າງໂຮງງານໄຟຟ້າ ແລ່ນດ້ວຍຖ່ານຫີນ; ສືບຕໍ່ນຳໃຊ້ທຶນຊ່ວຍເຫລືອ ເພື່ອສຳຫລວດຢັ້ງສືບ ແຮ່ເກືອກາລີ ຢູ່ເຂດພາກກາງຂອງ ລາວ ແລະ ແຮ່ບ໊ອກຊິດ ຢູ່ເຂດພາກໃຕ້ຂອງລາວ.

ຖືເປັນສຳຄັນການຮ່ວມມືດ້ານການລົງທຶນ, ການຄ້າ ລະຫວ່າງ ທ້ອງຖິ່ນຕ່າງໆ. ສົ່ງເສີມການຮ່ວມມື ລົງທຶນດ້ານການລ້ຽງສັດ ແລະ ປູກຕົ້ນໄມ້ອຸດສາຫະກຳ, ກະສິກຳ ລະຫວ່າງ ບັນດາທ້ອງຖິ່ນ ລຽບຕາມຊາຍ ແດນ ຂອງສອງປະເທດ ດ້ວຍຫລາຍຮູບການ, ໃນສະເພາະໜ້ານີ້ ແມ່ນປະຕິບັດຕາມແບບວິທີ ຝ່າຍ ຫວຽດນາມ ຮັບຜິດຊອບ ສະໜອງແນວພັນ, ເຕັກນິກ ແລະ ຮັບຈຳໜ່າຍ ຜະລິດຕະພັນ, ສ່ວນດິນດອນ ແລະ ແຮງງານແມ່ນຝ່າຍລາວຮັບຜິດຊອບ.

ຊຸກຍູ້ໃຫ້ພາກສ່ວນ ທີ່ກ່ຽວຂ້ອງ ຂອງສອງຝ່າຍ ເຊັນສັນຍາ ຊື້ - ຂາຍ ພະລັງງານໄຟຟ້າ ຂອງໂຄງ ການໄຟຟ້າ ນ້ຳໂມ ແລະ ໂຄງການໄຟຟ້າ ເຊຊະໜາມ 3 ໂດຍໄວ.

3.8 ສຸມໃສ່ສ້າງບັນດາເສັ້ນທາງຜ່ານຊາຍແດນໃຫ້ສຳເລັດ ເພື່ອສ້າງເງື່ອນໄຂສະດວກໃຫ້ຝ່າຍລາວ ຂົນສົ່ງສິນຄ້າຜ່ານດິນແດນ ແລະ ບັນດາທ່າເຮືອ ທີ່ມີຢູ່ໃນປະຈຸບັນຂອງ ຫວຽດນາມ. ຝ່າຍຫວຽດນາມ ສືບຕໍ່ ສະໜອງ ສິນເຊື່ອ ກໍ່ສ້າງເສັ້ນທາງເລກ 18 B ເພື່ອໃຫ້ສຳເລັດໃນປີ 2005, ຊ່ວຍລາວກໍ່ສ້າງຕອນທາງ 6 ກມ ຕໍ່ ລະຫວ່າງ ທາງເລກ 6 ຫາ ແຕ້ນຕັນ (ຫົວພັນ) ຢູ່ ຊາຍແດນ ລະຫ່ວາງ ສອງປະເທດ, ຕາມການສະເໜີ ຂອງຝ່າຍລາວ, ຝ່າຍຫວຽດນາມ ຊ່ວຍຄົ້ນຄ້ວາ ຄວາມອາດສາມາດເປັນໄປໄດ້ ໃນການທະລຸ ແລະ ກໍ່ສ້າງ ຕອນທາງແຕ່ ຫ້ວຍມ້າ - ຜາຖີ່ ໄລຍະທາງຍາວ 14 ກມ ຢູ່ແຂວງຫົວພັນ.

ສອງຝ່າຍປະສານສົມທົບກັນກໍ່ສ້າງ ເສັ້ນທາງເລກ 12 ຂອງແຕ່ລະປະເທດ ໃຫ້ສຳເລັດ ເພື່ອໃຫ້ໄດ້ ນຳໃຊ້ ໃນປີ 2006. ຝ່າຍຫວຽດນາມ ກຽມພ້ອມຕອບສະໜອງ ຄວາມຕ້ອງການ ທາງດ້ານການຂົນສົ່ງ ສິນຄ້າຂອງລາວ ຜ່ານທ່າເຮືອ ຫວຸ້ງ ອ່າງ ເມື່ອຝ່າຍລາວ ມີຄວາມຕ້ອງການ.

ຊຸກຍູ້ສົ່ງເສີມການຮ່ວມມື ແລກປ່ຽນບົດຮຽນ ແລະ ຮ່ວມມືລົງທຶນ ດ້ານການຄ້າ ລະຫວ່າງ ຂະແໜງ ການ ໂທລະຄົມມະນາຄົມ ຂອງສອງປະເທດ.

3.9. ປະສານສົມທົບກັນຄົ້ນຄ້ວາກົນໄກນະໂຍບາຍ ເພື່ອໃຫ້ສອດຄ່ອງກັບບັນດາຂໍ້ຕົກລົງ ທີ່ມີຢູ່ໃນ ປະຈຸບັນ ລະຫວ່າງ ສອງປະເທດ ແນໃສ່ຄຸ້ມຄອງ ແລະ ຍົກສູງປະສິດທິຜົນ ການນຳໃຊ້ແຫ່ລງທຶນຊ່ວຍ ເຫລືອແຕ່ລະປີໃຫ້ແກ່ລາວ ກໍຄືກົນໄກນະໂຍບາຍອື່ນໆ ເພື່ອຊຸກຍູ ການຮ່ວມມື ດ້ານເສດຖະກິດ, ການລົງ ທຶນ, ການຄ້າ ລະຫວ່າງ ສອງປະເທດ ໃຫ້ດີຂຶ້ນກວ່າເກົ່າ.

3.10. ສອງຝ່າຍຕົກລົງປະສານສົມທົບກັນ ປະຕິບັດເປັນຢ່າງດີ ຖະແຫຼງການຮ່ວມ ດ້ານການພັດ ທະນາເສດຖະກິດ - ສັງຄົມ ຢູ່ເຂດສາມຫລ່ຽມພັດທະນາ ກຳປູເຈຍ - ລາວ - ຫວຽດນາມ ຊຶ່ງໄດ້ລົງນາມ ຄັ້ງ ວັນທີ 27 / 11 / 2004 ຢູ່ທີ່ນະຄອນຫຼວງວຽງຈັນ.

3.11. ມອບໃຫ້ຄະນະກຳມາທິການຮ່ວມມືຂອງສອງປະເທດ ປະສານສົມທົບກັນຕີລາຄາ ສະພາບ ການປະຕິບັດສັນຍາວ່າດ້ວຍການຮ່ວມມື ດ້ານເສດຖະກິດ, ວັດທະນະທຳ, ວິທະຍາສາດ-ເຕັກນິກ ລະຫວ່າງ

ສອງປະເທດ ໄລຍະ ປີ 2001 - 2005; ກະກຽມສັນຍາ ແລະ ແຜນການຮ່ວມມື ໄລຍະ ປີ 2006 - 2010 ເພື່ອນຳສະເໜີລັດຖະບານຂອງສອງປະເທດພິຈາລະນາ, ເປັນພື້ນຖານເພື່ອເຊັນຮ່ວມກັນ ໃນວາລະກອງປະຊຸມ ລະຫວ່າງ ຄະນະກຳມາທິການຮ່ວມມື ລະຫວ່າງ ລັດຖະບານ ຄັ້ງທີ 28 ຊຶ່ງຈະຈັດຂຶ້ນໃນຕົ້ນປີ 2006 ທີ່ ນະຄອນຫລວງ ວຽງຈັນ.

4. ຝ່າຍລາວເຊີນບັນດາສະຫາຍການນຳຂັ້ນສູງຂອງຫວຽດນາມ ພ້ອມດ້ວຍຄອບຄົວ ມາພັກຜ່ອນຢູ່ ລາວ. ຝ່າຍຫວຽດນາມເຊີນບັນດາສະຫາຍການນຳຂັ້ນສູງຂອງລາວ ພ້ອມດ້ວຍຄອບຄົວໄປຫວຽດນາມເພື່ອ ກວດກາສຸຂະພາບ, ປິ່ນປົວ ແລະ ພັກຜ່ອນ.

ສອງຝ່າຍເອົາໃຈໃສ່ ສ້າງເງື່ອນໄຂໃຫ້ແກ່ ບັນດາພະນັກງານ ປະຕິວັດ ອາວຸໂສ ແລະ ອາດີດອາສາ ສະໝັກ ຫວຽດນາມ ມາຢ້ຽມຢາມ, ພັກຜ່ອນ ຢູ່ລາວ.

5. ສອງຝ່າຍຕົກລົງກັນ ຈະດຳເນີນກອງປະຊຸມ ຄັ້ງທີ 28 ຂອງຄະນະກຳມາທິການຮ່ວມມື ລະຫວ່າງ ລັດຖະບານ ກ່ຽວກັບການຮ່ວມມື ດ້ານເສດຖະກິດ, ວັດທະນະທຳ, ວິທະຍາສາດ - ເຕັກນິກ ໃນຕົ້ນປີ 2006 ຢູ່ທີ່ວຽງຈັນ, ນະຄອນຫລວງ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ສ່ວນວັນເວລາລະອຽດ ຈະແຈ້ງຜ່ານທາງການທູດ.

ບົດບັນທຶກສະບັບນີ້ ໄດ້ລົງນາມຮ່ວມກັນຢູ່ທີ່ຮ່າໂນ້ຍ, ນະຄອນຫລວງ ແຫ່ງ ສາທາລະນະລັດ ສັງຄົມ ນິຍົມ ຫວຽດນາມ ວັນທີ 07 ມັງກອນ (01) ປີ 2005. ເປັນສອງສະບັບດ້ວຍສອງພາສາ, ພາສາ ຫວຽດນາມ ແລະ ພາສາລາວ ທັ້ງສອງ ສະບັບ ລ້ວນແຕ່ມີ ຄຸນຄ່າເທົ່າທຽມກັນ.

ຕາງໜ້າ ລັດຖະບານ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ	ຕາງໜ້າ ລັດຖະບານ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ຫງຽນເຕີນຢຸ້ງ ຮອງ ນາຍົກລັດຖະມົນຕີ	ທອງລຸນ ສີສຸລິດ ຮອງ ນາຍົກລັດຖະມົນຕີ